ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
---===000===---

ທະນາຄານແຫ່ງ ສປປ ລາວ
ກົມບັນຊີແລະການເງິນ

ເລກທີ : 476/ກບງ
ນະຄອນຫຼວງວຽງຈັນ, ວັນທີ : 01 SEP 2016

# ບົດແນະນຳ
# ການບັນທຶກບັນຊີກ່ຽວກັບຄ່າເສື່ອມມູນຄ່າຊັບສິນ
# ສຳລັບທະນາຄານທຸລະກິດ ແລະ ສະຖາບັນການເງິນ

- ອີງຕາມກົດໝາຍວ່າດ້ວຍການບັນຊີ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມບັນຊີແລະການເງິນສະບັບເລກທີ 1047/ທຫລ, ລົງວັນທີ 30/12/2015.
- ອີງຕາມຂໍ້ຕົກລົງວ່າດ້ວຍການຮັບຮອງແຜນຜັງການບັນຊີ ແລະ ແບບຟອມໃບລາຍງານການເງິນສຳ ລັບທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ຂຶ້ນກັບທະນາຄານແຫ່ງ ສປປ ລາວ ສະບັບເລກ ທີ 672/ທຫລ, ລົງວັນທີ 02/09/2008.

ກົມບັນຊີແລະການເງິນ ທະນາຄານແຫ່ງ ສປປ ລາວ ອອກບົດແນະນຳການບັນທຶກບັນຊີກ່ຽວກັບຄ່າເສື່ອມມູນຄ່າຊັບສິນ ດັ່ງລຸ່ມນີ້:

## I. ຈຸດປະສົງ

ບົດແນະນຳສະບັບນີ້ມີຈຸດປະສົງເພື່ອເຮັດໃຫ້ການບັນທຶກບັນຊີ ກ່ຽວກັບຄ່າເສື່ອມມູນຄ່າຊັບສິນ ຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນ ໃຫ້ມີຄວາມຖືກຕ້ອງ ແລະ ສອດຄ່ອງກັບມາດຕະຖານບັນຊີສາກົນ IAS ສະບັບທີ 36. ຊັບສິນທີ່ຕ້ອງຫັກຄ່າເສື່ອມໃນບົດແນະນຳສະບັບນີ້ມີ: ເງິນລົງທຶນໃນບໍລິສັດຍ່ອຍ, ເງິນລົງທຶນໃນບໍລິສັດຮ່ວມ, ເງິນລົງທຶນໃນກິດຈະການຮ່ວມຄ້າ, ທີ່ດິນ, ອາຄານ, ອຸປະກອນ ແລະ ຊັບສິນບໍ່ມີຕົວຕົນ (ຄ່າຄວາມນິຍົມ).

## II. ອະທິບາຍຄຳຊັບ

ຄຳສັບຕ່າງໆທີ່ນຳໃຊ້ໃນບົດແນະນຳສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ຄ່າເສື່ອມມູນຄ່າຊັບສິນ: ໝາຍເຖິງ ມູນຄ່າຕາມບັນຊີ ສູງກວ່າ ມູນຄ່າທີ່ຄາດວ່າຈະໄດ້ຮັບຄືນຂອງຊັບສິນນັ້ນ.
2. ມູນຄ່າຄາດວ່າຈະໄດ້ຮັບຄືນ: ໝາຍເຖິງ ມູນຄ່າຍຸດຕິທຳຂອງຊັບສິນຫັກຕົ້ນທຶນໃນການຂາຍທຽບກັບມູນຄ່າຈາກການໃຊ້ຊັບສິນນັ້ນ ຫາກມູນຄ່າໃດສູງກວ່າໃຫ້ຖືເອົາມູນຄ່ານັ້ນ.